ຈັດຕັ້ງປະຕິບັດໂດຍ

Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ໂຄງການອາຊີວະສຶກສາ ໃນ ສປປ ລາວ (VELA III)

**ໂຄງການ VELA ສະໜັບສະໜູນ ສປປ ລາວ ໃນການຈັດຕັ້ງປະຕິບັດ ຮູບແບບ ອາຊີວະສຶກສາແບບຄວບຄູ່ ເພື່ອ ພັດທະນາກຳລັງແຮງງານທີ່ມີທັກສະ ທີ່ສອດຄ່ອງ ແລະ ຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.**

## ຄວາມເປັນມາ

ເສດຖະກິດຂອງ ສປປ ລາວ ກຳລັງໄດ້ຮັບຜົນກະທົບຈາກອັດຕາເງິນເຟີ້ທີ່ສູງ ແລະ ການຂາດກຳລັງແຮງງານທີ່ມີທັກສະ, ເຊິ່ງມັນກໍ່ເປັນອຸປະສັກສຳລັບໄວໜຸ່ມໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບເຊັ່ນກັນ. ການທີ່ນັກສຶກສາຈົບໃໝ່ ຂາດທັກສະພາກປະຕິບັດ ແລະ ຄວາມພ້ອມໃນການປະກອບອາຊີບ ໄດ້ສ້າງຊ່ອງວ່າງຂະໜາດໃຫຍ່ລະຫວ່າງການສຶກສາ ແລະ ການຈ້າງງານ. ອັດຕາການລົງທະບຽນເຂົ້າຮຽນທີ່ຫຼຸດລົງ, ໂດຍສະເພາະແມ່ນຈຳນວນນັກຮຽນຍິງ ໃນສາຂາວິຊາທີ່ສຳຄັນ, ແລະ ລະບົບອາຊີວະສຶກສາທີ່ມີ ຍັງບໍ່ສອດຄ່ອງ ກັບຄວາມຕ້ອງການຂອງຫົວໜ່ວຍທຸລະກິດ.

ເພື່ອແກ້ໄຂສິ່ງທ້າທາຍດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາ ໄດ້ສົ່ງເສີມອາຊີວະສຶກສາແບບ ຄວບຄູ່ (ອສຄ). ຮູບແບບການຮ່ວມມືແບບໃໝ່ນີ້ເຮັດໃຫ້ພາກລັດ ແລະ ຫົວໜ່ວຍທຸລະກິດ ຮ່ວມກັນໂດຍກົງເພື່ອເຮັດໃຫ້ການຝຶກອົບຮົມສອດຄ່ອງກັບຄວາມຕ້ອງການຕົວຈິງ ຂອງພາກອຸດສາຫະກຳ. ເປົ້າໝາຍແມ່ນສ້າງກຳລັງແຮງງານທີ່ມີສີມື, ມີຄວາມພ້ອມ ທີ່ຈະສາມາດຊຸກຍູ້ການພັດທະນາປະເທດຊາດ.

## ຈຸດປະສົງ

ການພັດທະນາສີມືແຮງງານຕາມຄວາມຕ້ອງການຂອງຕະຫຼາດ ໂດຍຜ່ານອາຊີວະສຶກສາແບບຄວບຄູ່ (ອສຄ) ສາມາດຊ່ວຍໃຫ້ໄວໜຸ່ມລາວເຂົ້າເຖິງຕະຫຼາດແຮງງານໄດ້.

## ວິທີດຳເນີນງານ

ໂຄງການ VELA ເຮັດວຽກໃກ້ຊິດກັບ ຄູ່ຮ່ວມງານທີ່ສຳຄັນເຊັ່ນ ກົມອາຊີວະສຶກສາຂອງ ກະຊວງສຶກສາທິການ ແລະ ກິລາ ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ໂຄງປະກອບທາງນິຕິກຳ ທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດວຽກງານ ອສຄ ໃນ ສປປ ລາວ.




| | |
|---|---|
| ຊື່ໂຄງການ | ໂຄງການອາຊີວະສຶກສາ ໃນ ສປປ ລາວ (VELA III) |
| ໃຫ້ທຶນໂດຍ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ |
| ເຂດເປົ້າໝາຍຂອງໂຄງການ | ໃນ ສປປ ລາວ ທົ່ວປະເທດ |
| ຄູ່ຮ່ວມງານໂຄງການ | ກະຊວງສຶກສາທິການ ແລະ ກິລາ (ສສກ), ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) |
| ໄລຍະເວລາ | ສິງຫາ 2024 - ກໍລະກົດ 2027 |

ໂຄງການ ຍັງສະໜັບສະໜູນບັນດາສະຖານອາຊີວະສຶກສາ ແລະ ສະຖານປະກອບການ ໃນ 11 ແຂວງ (ຫຼວງນໍ້າທາ, ຫົວພັນ, ຫຼວງພະບາງ, ຊຽງຂວາງ, ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ, ອັດຕະປື ແລະ ສາລະວັນ) ເພື່ອຮ່ວມກັນຈັດຕັ້ງປະຕິບັດ ອສຄ ໃນສາຂາວິຊາອາຊີບທີ່ມີຄວາມຕ້ອງການໃນຕະຫຼາດແຮງງານ. ເພື່ອຮັບປະກັນຜົນສຳເລັດໃນໄລຍະຍາວ, ໂຄງການ VELA ໄດ້ສຸມໃສ່ຍຸດທະສາດ 3 ລະດັບ ຄື:

- **ລະດັບນະໂຍບາຍ (ລະດັບມະຫາພາກ):** ສະໜັບສະໜູນຜູ້ວາງນະໂຍບາຍໃນການສ້າງລະບຽບການແບບຍືນຍົງ, ຍົກລະດັບວຽກງານການຮັບປະກັນຄຸນນະພາບ, ພ້ອມທັງລວມເອົາຫົວຂໍ້ສຳຄັນ ເຊັ່ນ ບົດບາດຍິງ-ຊາຍ ແລະ ອາຊີວະສຶກສາສີຂຽວ-ດິຈິຕອນ ເຂົ້າຢູ່ໃນຂອບນະໂຍບາຍລວມ.

- **ລະດັບການຈັດຕັ້ງ (ລະດັບກາງ):** ເສີມສ້າງຂີດຄວາມສາມາດ ໃຫ້ແກ່ສະຖານອາຊີວະສຶກສາ ແລະ ສະຖານປະກອບການ ໂດຍການຊ່ວຍເຫຼືອ ໃນການລວມເອົາທັກສະທາງສັງຄົມ ແລະ ການເປັນຜູ້ປະກອບການ ເຂົ້າຢູ່ໃນຫຼັກສູດການຮຽນ-ການສອນ.

- **ລະດັບບຸກຄົນ (ລະດັບຈຸລະພາກ):** ສະໜອງການຝຶກອົບຮົມແບບຄົບວົງຈອນ ແລະ ການໃຫ້ຄຳແນະນຳດ້ານວິຊາການ ໃຫ້ແກ່ຄູ-ອາຈານ, ຄູຝຶກຂອງສະຖານປະກອບການ ແລະ ຜູ້ບໍລິຫານ ເພື່ອຍົກລະດັບທັກສະດ້ານເຕັກນິກວິຊາການ ແລະ ການສິດສອນຂອງພວກເຂົາ.

*ພາບລວມການສະໜັບສະໜູນຂອງໂຄງການ VELA ຕໍ່ວຽກງານ ອສຄ. ຮູບພາບໂດຍ: © GIZ/ທະນາທິບ ອິນທິວົງ*

## ສິ່ງທີ່ພວກເຮົາບັນລຸ

ໂຄງການ VELA ໄລຍະທີ II (ປີ 2019-2024) ໄດ້ປະສົບຜົນສຳເລັດ ໃນການສ້າງການເປັນຄູ່ຮ່ວມງານກັນ ລະຫວ່າງ ສະຖານອາຊີວະສຶກສາ 4 ແຫ່ງ ແລະ ສະຖານປະກອບການຫຼາຍກວ່າ 150 ແຫ່ງ ເພື່ອຈັດຕັ້ງປະຕິບັດ ອສຄ. ເພື່ອສະໜັບສະໜູນວຽກງານດັ່ງກ່າວ, ສູນບໍລິການ ອສຄ ຈຶ່ງຖືກສ້າງຕັ້ງຂຶ້ນທີ່ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເພື່ອຊຸກຍູ້ສົ່ງເສີມການມີສ່ວນຮ່ວມຂອງພາກທຸລະກິດ. ຜົນສຳເລັດທີ່ສຳຄັນປະກອບມີ: ລະບົບການອອກໃບຢັ້ງຢືນ ໃຫ້ແກ່ສະຖານປະກອບການທີ່ເປັນຄູ່ຮ່ວມງານ ອສຄ, ການຝຶກອົບຮົມຄູຝຶກຂອງສະຖານປະກອບການ, ການນຳໃຊ້ລະບົບໃຫ້ຄຳແນະນຳດ້ານອາຊີບຢູ່ໃນສະຖານອາຊີວະສຶກສາທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ ເຊິ່ງລວມທັງການທົດສອບ ຄວາມຖະໜັດທາງດ້ານອາຊີບແບບດິຈິຕອນ (OASA) ສຳລັບໄວໜຸ່ມ ແລະ ການພັດທະນາມາດຕະຖານອາຊີບແຫ່ງຊາດ.

ນອກຈາກນີ້, ສະຖາບັນພັດທະນາອາຊີວະສຶກສາ ກໍຍັງໄດ້ຍົກລະດັບທັກສະ ໃຫ້ຄູ-ອາຈານ ໂດຍຜ່ານຫຼັກສູດຝຶກອົບຮົມໃໝ່ໆ, ເຊິ່ງລວມທັງການສ້າງຫ້ອງສະຕູດິໂອ ເພື່ອຜະລິດສື່ການສອນແບບດິຈິຕອນ. ໂຄງການຍັງໄດ້ສົ່ງເສີມ ແນວຄິດອາຊີວະສຶກສາສີຂຽວ (Green TVET) ໂດຍຜ່ານການຝຶກອົບຮົມຄູ ແລະ ການສ້າງຫຼັກສູດອອນລາຍໃໝ່ ກ່ຽວກັບການບໍລິຫານຄຸ້ມຄອງໂຮງແຮມ ແລະ ຮ້ານອາຫານແບບຍືນຍົງ.



*ຄູຝຶກຂອງສະຖານປະກອບການ ນຳພານັກສຶກສາ ໃນຂະນະທີ່ພວກເຂົາຮຽນປະຕິບັດຕົວຈິງ ຢູ່ຫ້ອງຄົວຂອງໂຮງແຮມ ໃນສາຂາວິຊາ ອາຫານ ແລະ ເຄື່ອງດື່ມ ແລະ ການປຸງແຕ່ງອາຫານແບບມືອາຊີບ. ຮູບພາບໂດຍ: © ທ່ານ ພູນຊັບ ເທບວົງສາ*

## ບົດບາດຍິງ-ຊາຍ ແລະ ການພັດທະນາເສດຖະກິດ

ໂຄງການ VELA III ມີຈຸດປະສົງໃນການວາງຮາກຖານເຮັດໃຫ້ການຮຽນການສອນແບບ ອສຄ ເປັນສ່ວນໜຶ່ງຂອງລະບົບອາຊີວະສຶກສາຂອງລາວ, ເຊິ່ງສອດຄ່ອງກັບເປົ້າໝາຍທີ 4 (ດ້ານຊັບພະຍາກອນມະນຸດ) ຂອງຍຸດທະສາດທີມເອີຣົບ ປະຈຳປີ 2021-2025 (TES). ໂຄງການນີ້ປະກອບສ່ວນເຂົ້າໃນຫຼາຍເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຊັ່ນ: ເປົ້າໝາຍທີ 4 (ການສຶກສາທີ່ມີຄຸນນະພາບ) ໂດຍການເພີ່ມໂອກາດການເຂົ້າເຖິງການສຶກສາ ສາຍອາຊີວະສຶກສາທີ່ທົ່ວເຖິງ ແລະ ສະເໝີພາບ; ເປົ້າໝາຍທີ 5 (ບົດບາດຍິງ-ຊາຍ) ໂດຍການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ໃນການຝຶກອົບຮົມວິຊາຊີບ; ແລະ ເປົ້າໝາຍທີ 8 (ວຽກທີ່ມີຄຸນຄ່າ ແລະ ການເຕີບໂຕທາງເສດຖະກິດ) ຜ່ານການພັດທະນາສີມືແຮງງານ ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

ບົດບາດຍິງ-ຊາຍ ກໍເປັນອີກໜຶ່ງວຽກງານຫຼັກທີ່ໂຄງການສຸມໃສ່, ໂດຍແນໃສ່ການດຶງດູດນັກສຶກສາເພດຍິງ ໃຫ້ເຂົ້າມາຮຽນໃນສາຍອາຊີວະສຶກສາໃຫ້ຫຼາຍຂຶ້ນ ໂດຍການເພີ່ມເນື້ອໃນທີ່ມີຄວາມລະອຽດອ່ອນດ້ານຄວາມສະເໝີພາບທາງເພດ ເຂົ້າໃນຫຼັກສູດການຝຶກອົບຮົມ ແບບ ອສຄ ພ້ອມທັງສ້າງຫຼັກສູດ ອສຄ ທີ່ໜ້າສົນໃຈສຳລັບນັກຮຽນເພດຍິງ. ເພື່ອຮັບປະກັນຄວາມຍືນຍົງດ້ານນິເວດ, ໂຄງການ VELA III ຍັງສະໜັບສະໜູນເປົ້າໝາຍທີ 13 (ການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ) ໂດຍເພີ່ມເນື້ອໃນອາຊີວະສຶກສາສີຂຽວ ເຂົ້າໃນຫຼັກສູດອາຊີວະສຶກສາ, ປັບປຸງການຝຶກອົບຮົມຄູ ໂດຍເນັ້ນໃສ່ພາກປະຕິບັດແບບຍືນຍົງ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ສົ່ງເສີມການສິດສອນແບບມີການສົນທະນາໂຕ້ຕອບ. ວຽກງານລິເລີ່ມເຫຼົ່ານີ້ ຈະເປັນການສ້າງພື້ນຖານທີ່ເຂັ້ມແຂງ ແລະ ຍືນຍົງ ໃຫ້ແກ່ການຈັດຕັ້ງປະຕິບັດ ອສຄ ໃນ ສປປ ລາວ.

### ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນຫນຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງຫນ້າໃຫ້ກະຊວງການຮ່ວມມື ດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກຳລັງສະຫນັບສະຫນູນບັນດາໂຄງການໃນ 4 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ, ຄ) ການພັດທະນາເສດຖະກິດແບບຍືນຍົງ ແລະ ງ) ວຽກງານການປົກຄອງທີ່ດີ,

ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos


| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für Internationale Zusammenarbeit (GIZ) GmbH |
| | ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ |
| | ໂຄງການອາຊີວະສຶກສາ ໃນ ສປປ ລາວ ໄລຍະ III (VELA III)<br>373/18 ຖະຫນົນວັດນາກໃຫຍ່, ບ້ານ ທ່າພະລານໄຊ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ. |
| | ໂທ: +856 21 353605<br>www.giz.de/laos (EN); www.giz.de/laos-la (LA) |
| ລົງວັນທີ | ເດືອນ ພະຈິກ 2024 |
| ອອກແບບໂດຍ | ຫນ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ |
| ຮູບຖ່າຍໂດຍ | GIZ/VELA |
| ຮຽບຮຽງໂດຍ | ທ່ານນາງ ອານຢາ ເຣເດີ |
| ຕິດຕໍ່ | ທ່ານນາງ ອານຢາ ເຣເດີ (anja.reder@giz.de) |
| | ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ |
| ຕາງໜ້າໃຫ້ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາແຫ່ງສະຫະພັນເຢຍລະມັນ (BMZ) |
| ເວັບໄຊທ໌ທີ່ກ່ຽວຂ້ອງ | https://dct.lncci.la/en/ |